# ກ່ຳພ້າ ກັບ ນາງງາ

ຂຽນເປັນຄຳເວົ້າທຳມະດາໂດຍ ດວງເດືອນ ບຸນຍາວົງ ● ຮູບແຕ້ມໂດຍ ວົງສະຫວັນ ດຳລົງສຸກ



# ກ່ຳພ້າ ກັບ ນາງງາ



ຂຽນເປັນຄຳເວົ້າທຳມະດາ ໂດຍ ດວງເດືອນ ບຸນຍາວົງ

ຮູບປະກອບ ໂດຍ ວົງສະຫວັນ ດຳລົງສຸກ

ນິທານພື້ນເມືອງ ເລື່ອງ
ກ່ຳພ້າ ກັບ ນາງງາ
ພາກ 1
ຂຽນເປັນຄຳເວົ້າທຳມະດາ ດວງເດືອນ ບຸນຍາວົງ
ຮູບແຕ້ມ ໂດຍ ວົງສະຫວັນ ດຳລົງສຸກ
ອອກແບບຈັດໜ້າ ບໍລິສັດ ດອກເກດ ຈັດພິມ ຈຳກັດ

ຈັດພິມໂດຍ: ສຳນັກພິມ ດອກເກດ

ຮ່ວມກັບ: ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ
Action with Lao Children (ALC)
ໂທ 021-416064

ອຸປະຖຳໂດຍ : Gakushuin Women's College

ແລະ JICA

© ສະຫງວນລິຂະສິດບົດ: ນາງ ດວງເດືອນ ບຸນຍາວົງ.
© ສະຫງວນລິຂະສິດຮູບແຕ້ມ: ວົງສະຫວັນ ດຳລົງສຸກ.
ຜູ້ໃດຈະນຳເອົາເນື້ອຄວາມຕອນໃດຕອນໜຶ່ງ ຫລືຮູບໃດໜຶ່ງ ໃນປຶ້ມນີ້ໄປ
ຊົມໃຊ້ ຫລືພິມອອກໃໝ່ ຕ້ອງໄດ້ຂໍອະນຸຍາດ ຈາກ ALC ຜູ້ຈັດພິມ ແລະເຈົ້າຂອງບົດ
ແລະຮູບແຕ້ມ ຕາມກົດໝາຍ/ລະບຽບ ວ່າດ້ວຍການປົກປ້ອງຊັບສິນທາງປັນຍາ.
ທະບຽນອະນຸຍາດເລກທີ: ທບ 223/ພຈ 06072011
ພິມຄັ້ງທີ 7
ຈຳນວນ: Gakushuin Women's College 2000 ຫົວ, JICA 1000 ຫົວ
ພິມທີ່ ລາວ ຢູນີ ພຣິ້ນ

ຄຳນຳ ໃນການຈັດພິມຄັ້ງທີ 7, ປີ 2011

# ພິມເຈັດເທື່ອແລ້ວເດີ້ ...!

ປຶ້ມກຳພ້າກັບຜີນ້ອຍ ແລະ ກຳພ້າກັບນາງງາ ຖືກຕີພິມອີກຄັ້ງ, ເທື່ອທີເຈັດແລ້ວເດີ້...! ເຫດທີ່ໄດ້ພິມສອງເລື່ອງນີ້ອອກມາອີກຄັ້ງ ມີສອງຂໍ້ຄື:

1. ແນ່ນອນວ່າແມ່ນ ສຽງຮຽກຮ້ອງຂອງແຟນໆ ທັງຮຸ່ນນ້ອຍຮຸ່ນໃຫຍ່ຈາກທົ່ວປະເທດ ທີ່ສົ່ງຂ່າວເຂົ້າມາຮຽກຫາ ALC ວ່າ "ເລື່ອງກຳພ້າຢູ່ຫ້ອງສະໝຸດໝົດແລ້ວ" "ຂາດຈົນສ້ອມແປງບໍ່ໄດ້ແລ້ວ" "ຄົນຖາມຫາຫລາຍໆ ທັງເດັກນ້ອຍທັງຜູ້ໃຫຍ່" "..." ຮຽກຮ້ອງມາປານນີ້ ຈະໃຫ້ເສຽສັດທາໄດ້ຈັ່ງໃດ.

2. ຕອນນີ້ ເລື່ອງຂອງທ້າວກຳພ້າ ບໍ່ໄດ້ເປັນແຕ່ນິທານພື້ນເມືອງຊື່ໆ ແລ້ວເດີ້, ແຕ່ໄດ້ກາຍເປັນໜຶ່ງໃນເລື່ອງທີ່ ເດັກນ້ອຍລາວທຸກຄົນຕ້ອງອ່ານ ເພາະໄດ້ຮັບການບັນຈຸເຂົ້າຢູ່ໃນຫລັກສູດ ວິຊາພາສາລາວ ຂອງຊັ້ນມັດທະຍົມປີທີ 1 ແລ້ວ. ຫາກດ້ວຍເນື້ອທີ່ອັນຈຳກັດໃນປຶ້ມແບບຮຽນ ເຮັດໃຫ້ເນື້ອເລື່ອງ ແລະ ອາລົມບາງຕອນຂາດໄປ. ໜ້າຈະດີກວ່າ ຖ້າຄູແນະນຳໃຫ້ນັກຮຽນຍືມປຶ້ມເລື່ອງນີ້ ຈາກຫ້ອງສະໝຸດໄປອ່ານຕື່ມ ຫລື ຈະເອົາປຶ້ມມາພານັກຮຽນອ່ານໃນຫ້ອງນຳ ກໍຍິ່ງມ່ວນ ທັງໄດ້ເນື້ອໃນຄົບຖ້ວນ. ຂໍໃຫ້ຄູທຸກໂຮງຮຽນທີ່ໄດ້ຮັບປຶ້ມເລື່ອງນີ້ ນຳໃຊ້ຢ່າງເຕັມທີ່.

ຂໍຂອບໃຈ ອາຈານ ດວງເດືອນ ບຸນຍາວົງ ເປັນຢ່າງສູງ ສຳລັບການນຳເລື່ອງລາວຂອງທ້າວກຳພ້າ ມາຮຽບຮຽງເປັນເລື່ອງສຳລັບເດັກ ທີ່ງົດງາມ ທັງເນື້ອຫາ ພາສາ ແລະ ຄະຕິທຳ. ຂອບໃຈຜູ້ອຸປະກຳທຸກທ່ານ ທັງໃນອະດີດ ແລະປັດຈຸບັນ, ທ່ານໄດ້ເຮັດໃຫ້ "ທ້າວກຳພ້າ" ກາຍເປັນຕຳນານ ທີ່ຈະຢູ່ຄູ່ກັບເດັກນ້ອຍລາວ ຕະຫລອດໄປ.

ກໍລະກົດ 2011

ຄະນະບັນນາທິການ ALC



ນັບແຕ່ກໍ່າພ້າ ໄດ້ນາງງາມມາເປັນຄູ່ຊີວິດ ທ້າວກໍມີຄວາມ
ສຸກສະບາຍ ບໍ່ງຽບເຫົງາເປົ່າປ່ຽວຄືແຕ່ກ່ອນ.
ເຖິງເດືອນຈຽງ ເຂົ້າໃນນາສຸກເຮື່ອ ພວກຜີທັງຫລາຍ
ກໍມາຊ່ອຍກ່ຽວ ຂົນໃສ່ເລົ້າໃສ່ເຍຍໄວ້ຢ່າງຮຽບຮ້ອຍ.
ເອົາເຂົ້າຂຶ້ນເລົ້າແລ້ວ ກໍ່າພ້າເຮັດບຸນລ້ຽງຜີຢ່າງໃຫຍ່.

(ດ້ວຍເຫດນີ້ ຊາວລາວຈຶ່ງ ມີປະເພນີ ເຮັດບຸນສູ່ນເຂົ້າ
ລ້ຽງຜີໄຮ່ຜີນາຜີເລົ້າ ສືບຕໍ່ມາທຸກວັນນີ້)
ສັດຕ່າງໆທີ່ເຄີຍກຶກແຮ້ວຂອງກໍ່າພ້າ ອອກມາຢ້ຽມ
ຢາມຮ່ວມເຮັດບຸນນໍາ



ຜີນ້ອຍເອງມາຢູ່ຮັບໃຊ້ໃນເຮືອນ ພໍປານວ່າເປັນໄທເຮືອນດຽວກັນ.
ເມື່ອໃດພວກສັດມາຢາມ ນາງວາງກໍຫລິ້ນກັບພວກມັນ ຢ່າງສະໜິດສະໜົມ
ເອົາເຂົ້າເປືອກ ສາລີ ໂຮຍຫວ່ານໃຫ້ນົກ ໄກ່ປ່າກິນ ເອົາໝາກກ້ວຍ
ໝາກຈຽງ ໃຫ້ເຫງັນ, ສັດຕົວໃດຢາກກິນອັນໃດ ນາງກໍໃຫ້ກິນ ທັງສັ່ງສອນ
ບໍ່ໃຫ້ອົ່ມເຫງບຽດບຽນກັນ.



ລະດູແລ້ງຜ່ານໄປແລ້ວ ຟ້າຝົນໃໝ່ພວມຈະຢ້ຽມເຂົ້າມາ ກ່ຳພ້າກັບນາງງາ ດຳລົງ ຊີວິດຢູ່ໃນເຮືອນຫລັງງາມ ທ່າມກາງປ່າດົງທຳມະຊາດ ບ່ອນພວກຜີມາຊ່ອຍບຸກເບີກ ກາກກາງເປັນທົ່ງນາແປນກວ້າງສຸດຊົ່ວຕາ.



ມື້ໜຶ່ງພວກໝູ່ຂອງກ່ຳພ້າສີ່ຫ້າຄົນ ໄດ້ອອກມາຊອກຄວາຍທີ່ຫລົງປ່າໄປໄກ ຂະນະທີ່ຕ້ອນຄວາຍເມືອແຫລ່ງນັ້ນ ພວກເຂົາຜ່ານມາໃກ້ໆສວນແລະທົ່ງນາຂອງກ່ຳພ້າ. ມີຜູ້ໜຶ່ງເວົ້າຂຶ້ນວ່າ:

- ດົນແລ້ວ ບໍ່ເຫັນບັກກ່ຳພ້າ ເຂົ້າໄປໃນບ້ານຂໍທານເຂົ້າ ຈັກມັນເປັນຕາຍຮ້າຍດີແນວໃດ ພວກເຮົາໄປຢາມເບິ່ງມັນດີບໍ່ ?"

ດັ່ງນັ້ນ ພວກເຂົາຈຶ່ງພາກັນມຸ່ງໜ້າມາຍັງດົງໃຫຍ່ ບ່ອນເຄີຍມາຊ່ອຍກ່ຳພ້າປຸກຕູບ ແຕ່ສິ່ງທີ່ພວກເຂົາໄດ້ເຫັນ ມັນບໍ່ໜ້າເປັນໄປໄດ້ !

ບໍລິເວນ ທີ່ເຄີຍເປັນປ່າຮົກດົງໜາ ບັດນີ້ແປນສະອາດ ມີຕົ້ນໄມ້ນາໆຊະນິດປູກລຽນເປັນແຖວກັນ ມີທັງຕົ້ນມ່ວງ ຕົ້ນມີ້ ຕົ້ນໝາກ ຕົ້ນພ້າວ ຊູໃບໄກວແກວ່ງຕາມແຮງລົມ ກົກສີດາ ກົກພິລາ ອອກໝາກສຸກເຫລືອງແດງ ໝູ່ນົກສິ່ງສຽງຈໍແຈບັນນອງ ມີຊີວິດຊີວາ. ພວກເຂົາຕົກໃຈ ບໍ່ກ້າເຂົ້າໄປໃກ້ ໄດ້ແຕ່ຈອບເບິ່ງຢູ່ໄກໆ !

ເວລານັ້ນ ເປັນຍາມແລງຄ້ອຍຄ່ຳ ນາງງາລົງມາເກັບຜັກໃນສວນໄປແຕ່ງກິນ ທັງຂັບລຳຄ່ອຍໆ ຢ່າງອອນຊອນ.

ພວກເຂົາເຫັນອ້າຍບ່າວຄົນໜຶ່ງພວມຜ່າຟືນ ທັງລຳອຸ່ມໆ ແລ້ວກໍຈື່ໄດ້ວ່າ



ນັ້ນແມ່ນ ກ່ຳພ້າ ໝູ່ຫລິ້ນຂອງພວກເຂົາແທ້ໆ ແລະນາງຜູ້ມາເກັບຜັກນັ້ນ ກໍງາມຍິ່ງກວ່າສາວໃດໆ ທີ່ພວກເຂົາເຄີຍເຫັນມາ. ເຄື່ອງນຸ່ງແພກໍຂອງນາງ ບົ່ງບອກວ່ານາງບໍ່ແມ່ນຊາວບ້ານທຳມະດາ; ນາງງາມຜູ້ນີ້ມາແຕ່ໃສ ? ມາຢູ່ກັບບັກກ່ຳພ້າໄດ້ແນວໃດ ? ຊິແມ່ນເມຍມັນບໍ ? ແລ້ວມັນເອງກໍນຸ່ງເຄື່ອງປານພະຍາຍິດໃຫຍ່ !

ພວກໝູ່ຂອງກ່ຳພ້າໂສເຫລ້ກັນ ແລະຈອບເບິ່ງຢູ່ຈົນຄ່ຳ ເພື່ອໃຫ້ຮູ້ລັກແນ່ວ່າຍິງງາມຄົນນີ້ແມ່ນໃຜ. ແມ່ນແລ້ວ ນາງເປັນເມຍທ້າວກ່ຳພ້າຢ່າງແນ່ນອນ ເພາະນາງແຕ່ງພາເຂົ້າສູ່ທ້າວກິນ ເອົາຂັນໝາກມາຕັ້ງ ແລ້ວທັງສອງກໍຄ້ຽວໝາກປ້ອນກັນ.



# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ